ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 35 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 ສິງຫາ 2016

ສຳນັກງານ ຄຄຊ
ເລກທີ 0872
ວັນທີ 05 SEP 2016
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 15/08/2016 ຫາ 19/08/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິລະບຽບວິໄນຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ຍ້ອນຍ້ອນຕົວເລກທາງດ້ານເສດຖະກິດຂອງເອີຣົບອອກມາດີ ເປັນຕົ້ນແມ່ນດັດຊະນີຄວາມເຊື່ອໝັ້ນທາງດ້ານເສດຖະກິດຂອງບັນດາປະເທດເອີຣົບ (Euro-Zone ZEW Survey) ເພີ່ມຂຶ້ນ ເປັນ 4,6 ໃນເດືອນ 8/2016 ເມື່ອທຽບໃສ່ເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 12/08/2016 | ອາທິດນີ້ 19/08/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1147 | 1,1315 | -1,48% |
| ໂດລາ/ເຢນ | 102,19 | 100,19 | 2,00% |
| ໂດລາ/ບາດ | 34,810 | 34,630 | 0,52% |
| ໂດລາ/ເປໂຊ | 46,60 | 46,34 | 0,56% |
| ໂດລາ/ຣູເປັຍ | 13.120,00 | 13.155,00 | -0,27% |
| ໂດລາ/ໂດລາສິງກະໂປ | 1,3463 | 1,3456 | 0,05% |
| ໂດລາ/ຢວນ | 6,6456 | 6,6512 | -0,08% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 12,54% ຈາກ 44,96 ໂດລາ/ບາເຣວ ມາເປັນ 50,60 ໂດລາ/ບາເຣວ ເນື່ອງຈາກກຸ່ມຜູ້ຜະລິດນ້ຳມັນດິບ (OPEC) ຍັງສືບຕໍ່ຮັກສາລະດັບປະລິມານການຜະລິດນ້ຳມັນໄວ້ໃນລະດັບເກົ່າ. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,64% ຈາກ 1.337,15 ມາເປັນ 1.345,66 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,09% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,03% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,66% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,20% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,82% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,87% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 3,09% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 2,77% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 12/08/2016 | | | ອາທິດນີ້ 19/08/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.081,15 | 8.115,00 | 8.093,43 | 8.077,68 | 8.100,76 | 8.086,54 | 0,04% | 0,18% | 0,09% |
| ບາດ | 233,72 | 234,15 | 234,04 | 234,75 | 235,74 | 235,59 | -0,44% | -0,68% | -0,66% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.110,53 | 8.145,15 | 8.127,84 | 8.117,47 | 8.143,13 | 8.130,30 | -0,09% | 0,02% | -0,03% |
| ບາດ | 234,40 | 235,48 | 234,94 | 234,97 | 235,87 | 235,42 | -0,24% | -0,17% | -0,20% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,36% | 0,37% | 0,43% | 0,49% | 0,52% | 0,54% | | | |
| ບາດ | 0,29% | 0,57% | 0,38% | 0,09% | 0,05% | -0,07% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,49% ທຽບໃສ່ວັນທີ 12/08/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 1,05%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,12% ເມື່ອທຽບໃສ່ວັນທີ 12/08/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,73%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 15-19/08/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 21,60 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 48,12 ລ້ານໂດລາ ແລະ ຂາຍໂດລາໄດ້ 26,51 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.051,05 ລ້ານບາດ (ໃນນີ້ ຊື້ບາດໄດ້ 243,82 ລ້ານບາດ ແລະ ຂາຍບາດໄດ້ 1.294,87 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 9,46% ແຕ່ເພີ່ມຂຶ້ນ 11,15% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 1,70 ລ້ານໂດລ້ານ ແລະ ເງິນບາດມີຈຳນວນ 9,94 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 8,16 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 5,11 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 0,13 ລ້ານໂດລາ ແຕ່ບໍ່ມີການຊື້-ຂາຍເງິນບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 08-12/08/2016 | | ອາທິດທີ 15-19/08/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **56,25** | **196,10** | **48,12** | **243,82** | **-14,46%** | **24,33%** |
| - ທ/ຄທຸລະກິດລັດ | 11,86 | 117,16 | 11,64 | 147,43 | -1,85% | 25,84% |
| - ທ/ຄທຸລະກິດອື່ນໆ | 44,39 | 78,94 | 36,48 | 96,38 | -17,83% | 22,09% |
| **2. ການຂາຍເງິນຕາຕ່າງປະເທດ** | **26,18** | **1.188,20** | **26,51** | **1.294,87** | **1,27%** | **8,98%** |
| - ທ/ຄທຸລະກິດລັດ | 12,47 | 137,04 | 14,80 | 176,33 | 18,66% | 28,67% |
| - ທ/ຄທຸລະກິດອື່ນໆ | 13,71 | 1.051,16 | 11,72 | 1.118,54 | -14,55% | 6,41% |
| **ຊື້-ຂາຍສຸດທິ ທທກ** | **30,06** | **-992,10** | **21,60** | **-1.051,05** | **-28,15%** | **5,94%** |
| ຜົດດ່ຽງ ຊື້-ຂາຍ | 53,45% | -505,91% | 44,89% | -431,08% | -16,01% | -14,79% |
| ມູນຄ່າການຊື້-ຂາຍ | **82,43** | **1.384,30** | **74,63** | **1.538,69** | **-9,46%** | **11,15%** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-3,40** | **0,00** | **-8,16** | **-5,11** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,40 | 0,00 | 8,16 | 5,11 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,00** | **4,00** | **1,70** | **9,94** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,29** | **0,04** | **0,13** | **0,00** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,31 | 0,04 | 0,13 | 0,00 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,02 | 0,00 | 0,00 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 08/2016 ຢູ່ໃນລະດັບ 2,15% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,18% ຈາກ 1,97% ໃນເດືອນ 07/2016.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 45,99 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 49,3% ທຽບໃສ່ອາທິດຜ່ານມາ.

III. ວຽກງານວິຊາສະເພາະ

1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 946 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 23,49% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 371,33 ຕື້ກີບ ເພີ່ມຂຶ້ນ 17,40% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (12-18/08/2016) ມີຈໍານວນ 1.806 ຄັ້ງ ໂດຍມີມູນຄ່າ 613,97 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 475 ຄັ້ງ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.004,08 ຈຸດ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 244.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,20 ຕື້ກີບ ເພີ່ມຂຶ້ນ 41,90% ທຽບໃສ່ອາທິດຜ່ານມາ. ໃນອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 47,72% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.700 ກີບ/ຮຸ້ນ ເພີ່ມຂຶ້ນ 22 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 10,34 ລ້ານກີບ ຫຼຸດລົງ 61,89% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດກວມເອົາ 100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,32%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.933 ກີບ/ຮຸ້ນ ຫຼຸດລົງ 30 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 242.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,19 ຕື້ກີບ ເພີ່ມຂຶ້ນ 45,77% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 49,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,31 ລ້ານກີບ ຫຼຸດລົງ 50% ເມື່ອທຽບໃສ່ອາທິດທີ່ຜ່ານມາ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດການ: ❶ເດີນທາງໄປຢ້ຽມຢາມ ແລະ ຖອດຖອນບົດຮຽນ ທີ່ປະເທດລັດເຊຍ, ❷ເປັນປະທານກອງປະຊຸມວຽກງານສິນເຊື່ອ ທີ່ ທຫລ, ❸ເຂົ້າຮ່ວມຮັບຟັງການໂອ້ລົມຂອງທ່ານນາຍົກລັດຖະມົນຕີ ທີ່ສູນ ICTC ຫຼັກ 5, ❹ເຂົ້າຮ່ວມພິທີປະດັບຫຼຽນຄໍາ ທີ່ຫ້ອງວ່າການສູນກາງພັກ, ❺ເຂົ້າຮ່ວມອວຍພອນປະທານສູນກາງແນວລາວສ້າງຊາດ ທີ່ສໍານັກງານສູນກາງແນວລາວສ້າງຊາດ, ❻ເຂົ້າຮ່ວມກອງປະຊຸມຄົບຄະນະຂອງ ກໍາມະທິການແຜນການ, ການເງິນ ແລະ ການກວດສອບ ປະຈໍາປີ 2016 ທີ່ສະພາແຫ່ງຊາດ, ❼ເຂົ້າຮ່ວມພິທີເປີດທະນາຄານ RHB ສາຂາສີຖານ ເໜືອ ແລະ ❽ຮັບການເຂົ້າຢ້ຽມຂໍ່ານັບປະທານສະພາບໍລິຫານ ກຸ່ມທະນາຄານ RHB ເບີຮາດ ທີ່ ທຫລ;

- ສໍາເລັດການຈັດ: ❶ກອງປະຊຸມເຜີຍແຜ່ວຽກງານ AML/CFT ຮ່ວມກັບກົມຄຸ້ມຄອງວິສາຫະກິດ ລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ ໃຫ້ແກ່ບໍລິສັດປະກັນໄພໃນ ສປປ ລາວ ທີ່ ທຫລ, ❷ກອງປະຊຸມຄະນະກໍາມະການພັດທະນາລະບົບຕ້ານການຟອກເງິນທີ່ທັນສະໄໝ (AML IT System), ❸ກອງປະຊຸມປຶກສາຫາລືກະກຽມເຮັດວຽກກັບຄະນະ IMF ທີ່ຈະມາປະເມີນຜົນເສດຖະກິດມະຫາພາກ ຢູ່ ສປປ ລາວ ພາຍໃຕ້ມາດຕາ IV ປະຈໍາປີ 2016;

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການເຂົ້າຮ່ວມ: ❶ສຳມະນາຂອງຫ້ອງການ TAOLAM ພາຍໃຕ້ຫົວຂໍ້: "Introduction to the Yields Curve and its Application" ທີ່ ໂຮງແຮມແລນມາກ ລິເວີວິວ, ❷ປະຊຸມປຶກສາຫາລືກ່ຽວກັບການກະກຽມສ້າງລະບົບ AML/CFT ທີ່ທັນສະໄໝ ຂອງສຳນັກງານຕ້ານການຟອກເງິນ, ❸ສຳມະນາ ໃນຫົວຂໍ້: "ລະບົບການຊຳລະສະສາງ ແລະ ການຄຸ້ມຄອງກອດກາ" ທີ່ປະເທດ ສ.ເກົາຫຼີ, ❹ປະຊຸມ ໃນຫົວຂໍ້: "Nascent Financial Technologies for Enhancing Access to Finance" ທີ່ປະເທດສິງກະໂປ, ❺ກອງປະຊຸມສຳມະນາ ໃນຫົວຂໍ້: "ທຸລະກິດການທະນາຄານ, ການຄຸ້ມຄອງບໍລິຫານ ແລະ ການບໍລິຫານຄວາມສ່ຽງ" ຢູ່ ສສ ຫວຽດນາມ;

- ສຳເລັດການສ້າງລະບົບສຳຮອງຂໍ້ມູນ RTGS ເປັນຊົ່ວໂມງ ໂດຍນຳໃຊ້ SSIS package ແລະ SQL server ແລະ ເປັນລາຍວັນ ໂດຍນຳໃຊ້ Batch file ແລະ FTP Server.

3. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ເຂົ້າຮ່ວມກອງປະຊຸມວຽກງານຈັດຕັ້ງທົ່ວປະເທດຄັ້ງທີ 10 ທີ່ຫ້ອງວ່າການສູນກາງພັກ, ❷ເຂົ້າຮ່ວມກອງປະຊຸມລັດຖະບານປະຈຳເດືອນ ສິງຫາ 2016 ທີ່ສຳນັກງານນາຍົກລັດຖະ ມົນຕີ, ❸ຮັບການເຂົ້າຢ້ຽມຂໍ່ານັບ ຈາກທ່ານ Hugh Evans ທູດອັງກິດ ແລະ ຜູ້ບໍລິຫານທະນາຄານ Standard Chartered ທີ່ ທຫລ;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ;

- ສືບຕໍ່ສ້າງປຶ້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;

- ກະກຽມເຂົ້າຮ່ວມກອງປະຊຸມ ປະຈຳປີ 2016 ຂອງ APG ຢູ່ປະເທດ ສ.ອາເມລິກາ;

- ສືບຕໍ່: ❶ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016, ❷ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016;

- ກອງປະຊຸມພົບປະໂອ້ລົມຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ເພັດສະຖາພອນ ແກ້ວວົງວິຈິດ